ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 001 ປປທ

ລົງວັນທີ 01. 03. 2011

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ວ່າດ້ວຍການປັບປຸງອັດຕາອາກອນຕົວເລກ

ທຸລະກິດ, ອາກອນກຳໄລ ແລະ ອາກອນລາຍໄດ້ຈາກເງິນເດືອນ.

------------------------

- ອີງຕາມລັດຖະທຳນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2;
- ອີງຕາມມາດຕາ 5 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 04/ສພຊ, ລົງວັນທີ 19 ພຶດສະພາ 2005.
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 01/ຄປຈ, ລົງວັທີ 11 ກຸມພາ 2011.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະບັນຍັດ :*

ມາດຕາ 1 : ປັບປຸງອັດຕາອາກອນຕົວເລກທຸລະກິດ

ຍົກເລີກການນຳໃຊ້ອັດຕາອາກອນຕົວເລກທຸລະກິດ 5% ແລ້ວນຳໃຊ້ອັດຕາດຽວ 10%.

ມາດຕາ 2 : ອັດຕາອາກອນກຳໄລ

2.1 ອັດຕາອາກອນກຳໄລ 28% ໃຊ້ສຳລັບນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປັບປຸງ.

2.2 ອັດຕາອາກອນກຳໄລ 30% ໃຊ້ສຳລັບນິຕິບຸກຄົນ ( ຜະລິດຕະພັນຢາສູບ ),ໃນນີ້ 2% ຈະມອບເຂົ້າກອງທຶນຄວບຄຸມຢາສູບ ຕາມມາດຕາ 46 ຂອງກົດໝາຍວ່າດ້ວຍການຄວບຄຸມຢາສູບ.

2.3 ອັດຕາອາກອນກຳໄລ ໃຊ້ສຳລັບວິສາຫະກິດສ່ວນບຸກຄົນ ແລະ ຜູ້ປະກອບອາຊີບອິດສະຫຼະ ໃຫ້ເກັບຕາມອັດຕາທະວີຄູນ ແຕ່ອັດຕາ 0% ຫາ 28% ຕາມຕາຕະລາງ ດັ່ງລຸ່ມນີ້ :

| ຂັ້ນ | ຖານກຳໄລແຕ່ລະຂັ້ນ | ພື້ນຖານຄິດໄລ່ | ອັດຕາ | ອາກອນ ແຕ່ລະຂັ້ນ | ອາກອນທັງໝົດ |
|---|---|---|---|---|---|
| 1 | ແຕ່ 3.600.000 ກີບລົງມາ | 3.600.000 ກີບ | 0% | 0 ກີບ | 0 ກີບ |
| 2 | ແຕ່ 3.600.001-8.000.000 ກີບ | 4.400.000 ກີບ | 5% | 220.000 | 220.000 |
| 3 | ແຕ່ 8.000.001-15.000.000 ກີບ | 7.000.000 ກີບ | 10% | 700.000 | 920.000 |
| 4 | ແຕ່ 15.000.001-25.000.000 ກີບ | 10.000.000 ກີບ | 15% | 1.500.000 | 2.420.000 |
| 5 | ແຕ່ 25.000.001-40.000.000 ກີບ | 15.000.000 ກີບ | 20% | 3.000.000 | 5.420.000 |
| 6 | ແຕ່ 40.000.001 ກີບ ຂຶ້ນໄປ | .................. | 28% | ............... | ................ |

**ມາດຕາ 3 : ອັດຕາອາກອນລາຍໄດ້ຈາກເງິນເດືອນ**

ອາກອນລາຍໄດ້ຈາກເງິນເດືອນ ສຳລັບຄົນລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທຸກຄົນທີ່ມີລາຍໄດ້ຢູ່ ສປປ ລາວ, ໃຫ້ເກັບຕາມອັດຕາທະວີຄູນຢ່າງເປັນເອກະພາບກັນ ແຕ່ 0% ຫາ 28% ຕາມຕາຕະລາງ ດັ່ງລຸ່ມນີ້ :

| ຂັ້ນ | ຖານເງິນເດືອນແຕ່ລະຂັ້ນ | ພື້ນຖານຄິດໄລ່ | ອັດຕາ | ອາກອນ ແຕ່ລະຂັ້ນ | ອາກອນທັງໝົດ |
|---|---|---|---|---|---|
| 1 | ແຕ່ 1.000.000 ກີບ ລົງມາ | 1.000.000 ກີບ | 0% | 0 ກີບ | 0 ກີບ |
| 2 | ແຕ່ 1.000.001-3.000.000 ກີບ | 2.000.000 ກີບ | 5% | 100.000 | 100.000 |
| 3 | ແຕ່ 3.000.001-6.000.000 ກີບ | 3.000.000 ກີບ | 10% | 300.000 | 400.000 |
| 4 | ແຕ່ 6.000.001-12.000.000 ກີບ | 6.000.000 ກີບ | 15% | 900.000 | 1.300.000 |
| 5 | ແຕ່ 12.000.001-24.000.000 ກີບ | 12.000.000 ກີບ | 20% | 2.400.000 | 3.700.000 |
| 6 | ແຕ່ 24.000.001-40.000.000 ກີບ | 16.000.000 ກີບ | 25% | 4.000.000 | 7.700.000 |
| 7 | ແຕ່ 40.000.001 ກີບ ຂຶ້ນໄປ | ................. | 28% | | ................ |

**ມາດຕາ 4 :** ອັດຕາອາກອນຕົວເລກທຸລະກິດ ອາກອນກຳໄລ ແລະ ອາກອນລາຍໄດ້ຈາກເງິນເດືອນຂອງ ຄົນລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ຂັດກັບລັດຖະບັນຍັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ມາດຕາ 5 :** ຜົນສັກສິດ

ລັດຖະບັນຍັດສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ນັບແຕ່ວັນທີ 01 ມັງກອນ 2011 ເປັນຕົ້ນໄປ ຈົນກວ່າຈະມີການປະກາດໃຊ້ກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງໃໝ່.

**ປະທານປະເທດແຫ່ງ ສປປລາວ.**

ຈູມມາລີ ໄຊຍະສອນ